# ສຳເລັດຢ່າງຈົບງາມ

## ພິທີລົງນາມສັນຍາວ່າດ້ວຍສືບຕໍ່ຮ່ວມມືໂຄງການບັດນັກສຶກສາ

## ລະຫວ່າງ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ແລະ ສະຖາບັນການທະນາຄານ

**ນະຄອນຫຼວງວຽງຈັນ, ວັນທີ 07 ມິຖຸນາ 2023**




ໃນວັນທີ 07 ມິຖຸນາ 2023, ຢູ່ທີ່ສະຖາບັນການທະນາຄານ ໄດ້ມີການຈັດພິທີລົງນາມສັນຍາວ່າດ້ວຍການສືບຕໍ່ຮ່ວມມືໂຄງການບັດນັກສຶກສາ ລະຫວ່າງ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ແລະ ສະຖາບັນການທະນາຄານ

ການລົງນາມໃນຄັ້ງນີ້ ຕາງໜ້າ ທຄຕລ ໂດຍ **ທ່ານ ກົງສັກ ສຸພອນສີ**, ຮອງອ□ານວຍການ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ແລະ **ທ່ານ ປອ ນາງ ທອນມີ ແກ້ວກິນນາລີ**, ຮອງຜູ້ອຳນວຍການສະຖາບັນການທະນາຄານ ໂດຍໄດ້ຮັບກຽດເຂົ້າຮ່ວມເປັນສັກຂີພະຍານໂດຍ **ທ່ານ ປອ ອາຄົມ ປຣະເສີດ, ກຳມະການພັກ ທະນາຄານແຫ່ງ ສປປ ລາວ ຜູ້ອຳນວຍການສະຖາບັນການທະນາຄານ** ພ້ອມດ້ວຍຄະນະຜູ້ບໍລິຫານທັງສອງຝ່າຍ, ຄູອາຈານ-, ຕະຫຼອດຮອດພະນັກງານຂອງທັງສອງຝ່າຍ ກໍ່ໄດ້ເຂົ້າຮ່ວມຢ່າງພ້ອມພຽງ.

ທຄຕລ ແລະ ສທຄ ແມ່ນໄດ້ມີການຮ່ວມມືກັນປະຕິບັດໂຄງການບັດນັກສຶກສານັບຕັ້ງແຕ່ເລີ່ມໂຄງການປີ 2011 ດ້ວຍດີຕະຫຼອດມາ ໃນປີນີ້ກໍ່ສືບຕໍ່ປະຕິບັດເພື່ອການຮ່ວມມືທີ່ດີ ແລະ ສ້າງປະໂຫຍດຄວາມສະດວກສະບາຍໃຫ້ກັບການບໍລິຫານຂອງ ສະຖາບັນ ແລະ ນັກຮຽນ. ເຊິ່ງຜະລິດຕະພັນດັ່ງກ່າວແມ່ນການພັດທະນາບັດນັກສຶກສາເປັນບັດດຽວກັບບັດເອທີເອັມເພື່ອນໍາໃຊ້ໄວ້ຢັ້ງຢືນຕົວຕົນຂອງນັກສຶກສາ, ຢັ້ງຢືນການເຂົ້າຫ້ອງສອບເສັງ,ໃຊ້ໄວ້ຊໍາລະຄ່າຮຽນ - ຄ່າທໍານຽມຕ່າງໆ ແລະ ສາມາດຖອນເງິນສົດໄດ້ທີ່ຕູ້ ATM.

ອີງໃສ່ສະພາບໃນປະຈຸບັນ ກ່ຽວກັບການຊຳລະສະສາງ ແມ່ນມີທິດບາດທັນທິດໄປສູ່ລະບົບ ດີຈີຕອນ ທີ່ທັນສະໄໝ, ການແຂ່ງຂັນກັບເວລາ ແລະ ການເອື້ອອຳນວຍຄວາມສະດວກໃຫ້ແກ່ວຽກງານຮອບດ້ານ, ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ໄດ້ແນມເຫັນຄວາມສຳຄັນ ຂອດບໍລິການຊຳລະສະສາງໃຫ້ມີຄວາມຄ່ອງຕົວ ພ້ອມທັງແນ່ໃສ່ການຮ່ວມມືເຂົ້າຊ່ວຍເຫລືອແກ່ທຸກພາກສ່ວນໃນສັງຄົມລາວ, ໂດຍສະເພາະບັນດາ ສະຖາບັນການສຶກສາຕ່າງໆ, ເພື່ອທັນການຊຳລະຄ່າລົງທະບຽນ, ຄ່າຮຽນ ແລະ ຄ່າທຳນຽມຕ່າງໆ ຂອງນັກສຶກສາ ຈາກການຊຳລະເປັນເງິນສົດ ໃຫ້ຫັນມານຳໃຊ້ບັດເອເລັກໂຕຼນິກ ໂດຍອອກເປັນບັດນັກສຶກສາ ທີ່ສາມາດນຳໃຊ້ເປັນບັດດຽວຄືກັນກັບບັດເອທີເອັມ ເພື່ອເປັນການປູກຈິດສຳນຶກໃຫ້ແກ່ນັກສຶກສາຮູ້ຈັກການອອມ ແລະ ເພື່ອຫຼຸດຜ່ອນການນຳໃຊ້ເງິນສົດຫັນມາໃຊ້ການຊຳລະ ແລະ ບໍລິການທາງເອເລັກໂທຼນິກຫຼາຍຂຶ້ນ. ເພື່ອເຮັດໃຫ້ວຽກງານດັ່ງກ່າວ ຫັນກ້າວໄປສູ່ຄວາມທັນສະໄໝ, ມີຄວາມປອດໄພ ແລະ ອຳນວຍຄວາມສະດວກແກ່ນັກສຶກສາໃນອະນາຄົດຕະຫລອດໄປ.

ນະໂອກາດນີ້ຂໍສະແດງຄວາມຂອບໃຈມາຍັງສະຖາບັນການທະນາຄານ ທີ່ໄດ້ໃຫ້ຄວາມເຊື່ອໝັ້ນ ແລະ ເລືອກໃຊ້ບໍລິການຂອງ ທຄຕລ ໂດຍສະເພາະວຽກງານໂຄງການບັດນັກສຶກສາ, ທຄຕລ ຈະສືບຕໍ່ພັດທະນາລະບົບການບໍລິການໃຫ້ມີຄວາມທັນສະໄໝ ແລະ ສືບຕໍ່ຮ່ວມມືກັບພາກສ່ວນອື່ນໆໂດຍຂະຫຍາຍທຸກຜະລິດຕະພັນຂອງ ທຄຕລ ແມ່ນເນັ້ນຄວາມທັນສະໄໝ, ສະດວກສະບາຍ, ມີຄວາມປອດໄພ ກວດສອບໄດ້ ແລະ ໄດ້ມາດຕະຖານສາກົນ ໂດຍຄຳນຶງເຖິງຄວາມຕ້ອງການຂອງລູກຄ້າ ບົນພື້ນຖານຄວາມຮັບຜິດຊອບສູງຕໍ່ສັງຄົມ. ເພື່ອໃຫ້ລູກຄ້າ ແລະ ສັງຄົມໄດ້ຮັບຜົນປະໂຫຍດສູງສຸດ.

---------------------------------

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ທັນສະໄໝ ວ່ອງໄວ ໝັ້ນໃຈ

ຂຽນຂ່າວໂດຍ: ນາງ ສຸກພາວັນ ສີວົງໄຊ